

# 7 ການເລືອກເຟັ້ນ ແລະ ການຮຽນຮູ້ພາສາ

ເມື່ອເດັກສາມາດໝູນໃຊ້ທັກສະຂັ້ນພື້ນຖານໃນການສື່ສານ ດັ່ງທີ່ໄດ້ອະທິບາຍຢູ່ໃນບົດທີ 4 ແລ້ວ. ມັນກໍ່ໝາຍຄວາມວ່າ ເດັກຜູ້ນັ້ນພ້ອມແລ້ວ ສໍາລັບການເລີ່ມຮຽນຮູ້ພາສາ. ໃນຂັ້ນຕົ້ນ ເດັກຫູໜວກ ຫຼື ເດັກຜູ້ທີ່ມີບັນຫາໃນການໄດ້ຍິນ ອາດຈະເລີ່ມຮຽນພາສາມື ຫຼື ພາສາເວົ້າ ກໍ່ໄດ້. ແຕ່ຕ້ອງເບິ່ງວ່າພາສາປະເພດໃດ ທີ່ສາມາດຕອບສະໜອງຄວາມຕ້ອງການຂອງເດັກຜູ້ນັ້ນ.

ປະເພດພາສາທີ່ເດັກຈະຮຽນນັ້ນ ກໍ່ຂຶ້ນກັບຫຼາຍປັດໃຈ ເຊັ່ນ: ຄວາມສາມາດໃນການໄດ້ຍິນຂອງເດັກຜູ້ນັ້ນ, ພາສາປະເພດໃດທີ່ລາວມັກ, ຄວາມສາມາດພື້ນຖານຂອງເດັກ ແລະ ຂໍ້ມູນ, ອຸປະກອນ ທີ່ພໍ່ແມ່ຂອງເດັກຈະສາມາດຫາໄດ້ຈາກຊຸມຊົນ. ພ້ອມນັ້ນກໍ່ຂຶ້ນກັບຄວາມເຂົ້າໃຈ ຂອງຜູ້ເປັນພໍ່ແມ່ ທີ່ມີຕໍ່ຄົນຫູໜວກ. ຖ້າພໍ່ແມ່ຂອງເດັກຫາກຮູ້ຈັກກັບຄົນຫູໜວກຜູ້ໃດຜູ້ໜຶ່ງໃນຊຸມຊົນ, ກໍ່ຍິ່ງຈະຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈ ແລະ ຍອມຮັບຄວາມຫູໜວກຂອງເດັກໄດ້ດີຂຶ້ນ, ພ້ອມນັ້ນຍັງຈະຊ່ວຍໃຫ້ພໍ່ແມ່ເດັກສາມາດຊອກຮູ້ວິທີທາງ ເພື່ອຊ່ວຍໃຫ້ເດັກສາມາດຮຽນຮູ້ ພາສາໄດ້ອີກດ້ວຍ.

ໃນບາງຂົງເຂດ ທີ່ມີຂໍ້ມູນ ອຸປະກອນ ກ່ຽວກັບເດັກຫູໜວກຈໍາກັດ, ຜູ້ເປັນພໍ່ແມ່ບໍ່ມີທາງເລືອກສໍາລັບປະເພດພາສາທີ່ເດັກຄວນຮຽນ. ແຕ່ຖ້າພໍ່ແມ່ຂອງເດັກເອົາໃຈໃສ່ສັງເກດເຖິງຄວາມຕ້ອງການ ແລະ ຄວາມສາມາດຂອງເດັກ, ກໍ່ອາດຈະຊ່ວຍໃຫ້ເຂົາເຈົ້າສາມາດຕັດສິນໃຈໄດ້ຖືກຕ້ອງ.



*ມັນອາດຈະເປັນເລື່ອງຍາກໃນການຊອກຫາສິ່ງທີ່ດີສຸດໃຫ້ລູກຂອງທ່ານ ແຕ່ທ່ານຕ້ອງພະຍາຍາມ.*

# ການຮຽນພາສາຕັ້ງແຕ່ອາຍຸຍັງນ້ອຍ ແມ່ນມີຄວາມສຳຄັນ

ໄລຍະເວລາທີ່ເໝາະສົມທີ່ສຸດ ສຳລັບເດັກໃນການຮຽນຮູ້ພາສາ ແມ່ນຕັ້ງແຕ່ເກີດ ຈົນເຖິງ ອາຍຸ 7 ປີ. ໂດຍປົກກະຕິແລ້ວ ເດັກຈະຮຽນຮູ້ພາສາລະຫວ່າງອາຍຸ 2 ຫາ 4 ປີ. ຖ້າຫາກວ່າເດັກນ້ອຍບໍ່ຮຽນພາສາໃນໄລຍະອາຍຸ 7 ຫຼື 8 ປີແລ້ວ, ມັນກໍ່ຈະລຳບາກທີ່ສຸດ ທີ່ຈະຮຽນພາສາເມື່ອອາຍຸແກ່ຂຶ້ນ ແລະ ຖ້າເດັກນ້ອຍຫູໜວກ ຫາກບໍ່ຮຽນພາສາເວົ້າ ຫຼື ພາສາສັນຍະລັກແລ້ວ ມັນກໍ່ຈະເປັນການຍາກທີ່ເຂົາຈະສາມາດພັດທະນາທັກສະໃນການຄົ້ນຄິດ ຢ່າງສົມບູນແບບໄດ້. ເຊິ່ງນີ້ຄືເຫດຜົນວ່າເປັນຫຍັງການຮຽນພາສາຈຶ່ງມີຄວາມຈຳເປັນ.

## ເດັກນ້ອຍຮຽນຮູ້ພາສາໄດ້ແນວໃດ

ພາສາໝູນໃຊ້ສຽງ, ການຂີດຂຽນ ຫຼື ສັນຍະລັກ ເພື່ອເປັນສື່ກາງໃນການສື່ສານຂອງຄົນເຮົາ. ການອ່ານ, ການຂຽນ, ການປາກເວົ້າ ແລະ ການໃຊ້ສັນຍະລັກແມ່ນບັນດາວິທີ ໃນການໝູນໃຊ້ພາສາ. ຂັ້ນທຳອິດທີ່ເດັກເລີ່ມຮຽນຮູ້ການນຳໃຊ້ພາສາແມ່ນ ການຈື່ຈຳຊື່ຂອງບຸກຄົນ ຫຼື ວັດຖຸສິ່ງຂອງທີ່ເດັກເຫັນທຸກໆມື້ ເຊັ່ນ: ຄຳວ່າ "ແມ່", "ແມວ" ຫຼື "ແອນ້ອຍ" ໂດຍທົ່ວໄປ ຄຳສັບທີ່ເດັກຈະຮູ້ເວົ້າທຳອິດແມ່ນຄຳສັບທີ່ພາໃຫ້ເກີດມີການກະທຳໃດໜຶ່ງເຊັ່ນ: "ນົມ", "ບໍ່" ຫຼື ຄຳວ່າ "ອູ້ມ".

ເບື້ອງຕົ້ນເດັກນ້ອຍຮູ້ຈັກຄຳສັບເປັນຄຳໆ ທີ່ເປັນຄຳດ່ຽວ. ຫຼັງຈາກນັ້ນ ຈຶ່ງຄ່ອຍໆຮຽນຮູ້ຫຼັກການເພື່ອໃຊ້ຄຳສັບເຫຼົ່ານັ້ນຮ່ວມກັນ. ໂດຍຜ່ານການໝູນໃຊ້ພາສາກັບຄົນອ້ອມຂ້າງຫຼາຍຄັ້ງຕໍ່ຫຼາຍຄັ້ງ, ເດັກນ້ອຍຈຶ່ງຮຽນຮູ້ຫຼັກການຂອງພາສາໄດ້ໃນທີ່ສຸດ.

ເດັກຮຽນຮູ້ພາສາໂດຍຜ່ານການຟັງ ແລະ ການເຫັນຄົນອື່ນໝູນໃຊ້ມັນຢູ່ອ້ອມຕົວພວກເຂົາ. ພ້ອມທັງຝຶກຊ້ອມສິ່ງທີ່ເຂົາເຈົ້າໄດ້ເຫັນ ແລະ ໄດ້ຍິນໄປນຳ. ເມື່ອພວກເຂົາຮຽນຮູ້ຄຳສັບ ແລະ ຫຼັກການໃນການໃຊ້ພາສາຫຼາຍຂຶ້ນ, ເດັກນ້ອຍກໍ່ຈະພັດທະນາຄວາມສາມາດທາງດ້ານຄວາມຄິດໄປນຳ, ເຖິງແມ່ນວ່າພວກເຂົາຈະເວົ້າຜິດແດ່ ຖືກແດ່ກໍ່ຕາມ ແຕ່ໃນທີ່ສຸດພວກເຂົາກໍ່ຈະສາມາດສື່ສານກັບຄົນອື່ນໄດ້ຢ່າງສຳເລັດຜົນ.




*ເດັກນ້ອຍຮຽນຮູ້ວ່າ ຄຳເວົ້າມີພະລັງເຮັດໃຫ້ບາງສິ່ງບາງຢ່າງເກີດຂຶ້ນ. ມັນສາມາດຕອບສະໜອງຄວາມຕ້ອງ ການ ແລະ ນຳມາໃນສິ່ງທີ່ເດັກຢາກໄດ້ໂດຍຜ່ານການສື່ສານ.*




*ເດັກນ້ອຍຮຽນຮູ້ພາສາໂດຍການຝຶກແອບກັບຄົນອື່ນໆ.*

# ພາສາ ແລະ ຄວາມຄິດພັດທະນາໄປພ້ອມໆກັນ

ພາສາຊ່ວຍໃຫ້ຄົນເຮົາສາມາດສື່ສານກັບຄົນອື່ນໄດ້ ແລະ ກໍ່ຍັງເຮັດໃຫ້ພວກເຮົາສື່ສານ ກັບຕົວເອງໄດ້ອີກ. ພາສາທີ່ເດັກໝູນໃຊ້ເມື່ອຕອນເຂົາເຈົ້າຍັງນ້ອຍ ກາຍເປັນເຄື່ອງມືທີ່ເດັກໝູນໃຊ້ ເພື່ອພັດທະນາຄວາມຄິດ ເຊັ່ນ: ພາສາທີ່ເດັກໃຊ້ເວົ້າກັບຕົນເອງ. ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າ ສິ່ງທີ່ຄົນເຮົາຄົ້ນຄິດ ແມ່ນຂຶ້ນກັບວ່າ ພວກເຮົາຮູ້ຈັກພາສາຫຼາຍປານໃດ ແລະ ສາມາດໝູນໃຊ້ພາສາໄດ້ແນວໃດ.







ຖ້າຫາກເດັກສາມາດຮຽນຮູ້ພາສາໄດ້ຫຼາຍເທົ່າໃດ (ບໍ່ວ່າຈະເປັນການເວົ້າ ຫຼື ໃຊ້ສັນຍະລັກ), ກໍ່ຈະເຮັດໃຫ້ເຂົາເຈົ້າເຂົ້າໃຈໂລກອ້ອມຂ້າງ, ສະແດງຄວາມຮູ້ສຶກ, ຄົ້ນຄິດ, ຄາດຫວັງ, ວາງແຜນ ແລະ ສື່ສານກັບຜູ້ຄົນອ້ອມຂ້າງເຂົາເຈົ້າໄດ້ດີຂຶ້ນເທົ່ານັ້ນ.

**ເດັກນ້ອຍພັດທະນາຄວາມຄິດຂອງເຂົາເຈົ້າເມື່ອ:**

- ພວກເຂົາເຫັນ ແລະ ໄດ້ຍິນຄົນອື່ນໆ ໝູນໃຊ້ຄຳສັບ ແລະ ສັນຍະລັກ ເພື່ອສື່ສານກັນ.
- ພວກເຂົາໄດ້ໃຊ້ພາສາ ເພື່ອອະທິບາຍສິ່ງທີ່ພວກເຂົາໄດ້ເຫັນ, ໄດ້ຍິນ ແລະ ໄດ້ສຳຜັດ.
- ພວກເຂົາໝູນໃຊ້ພາສາເພື່ອສະແດງຄວາມຮູ້ສຶກຕໍ່ສິ່ງທີ່ພວກເຂົາປະສົບພົບເຫັນ.
- ພວກເຂົາໝູນໃຊ້ພາສາ ເພື່ອສື່ສານລະຫວ່າງສິ່ງຂອງຫຼາຍຢ່າງ.







*“ປານີ”ພັດທະນາທັກສະໃນການຄົ້ນຄິດ ໂດຍຜ່ານການໄດ້ຍິນຄົນອື່ນ ໝູນໃຊ້ພາສາ ເພື່ອສະແດງຄວາມຄິດເຫັນ ແລະ ທັດສະນະ.*

## ເດັກນ້ອຍພັດທະນາ ທັກສະໃນການຄົ້ນຄິດເທື່ອລະກ້າວ

ເດັກນ້ອຍຮຽນຮູ້ທັກສະໃນການຄົ້ນຄິດແບບງ່າຍໆໂດຍຜ່ານການຫຼິ້ນ. ຍົກຕົວຢ່າງ: ເມື່ອເດັກນ້ອຍຮູ້ຈັກຄຳວ່າ “ນ້ອຍ” ແລະ “ໃຫຍ່”. ເຂົາຈະໃຊ້ຄຳສັບເຫຼົ່ານີ້ເພື່ອໃຫ້ຮູ້ວ່າ ມີໝາກບານໜ່ວຍນ້ອຍ ແລະ ໝາກບານໜ່ວຍໃຫຍ່.







ຕໍ່ມາເດັກກໍ່ສາມາດເຂົ້າໃຈສົມທຽບລະຫວ່າງ “ໃຫຍ່” ແລະ “ນ້ອຍ” ລາວຈຶ່ງເລີ່ມຄົ້ນຄິດຫາສິ່ງໃຫຍ່ ແລະ ນ້ອຍ ແລະ ຮຽນຮູ້ກ່ຽວກັບການສົມທຽບຂະໜາດ.

## ທັກສະພື້ນຖານໃນການຄິ້ນຄິດ ແລະ ພາສາ

ໃນຂະນະທີ່ເດັກຮຽນຮູ້ພາສາ, ພວກເຂົາໄດ້ຈັດລຽງຄວາມຄິດ ພ້ອມທັງສ້າງຄວາມສຳພັນ ລະຫວ່າງຄວາມຄິດທີ່ແຕກຕ່າງກັນ.

- ວັດຖຸ, ບຸກຄົນ ຫຼື ເຫດການເປັນສາເຫດໃຫ້ສິ່ງຕ່າງໆ ເກີດຂຶ້ນໄດ້ແນວໃດ.




- ຮູ້ຈັກວິທີຈັດລຽງລຳດັບອັນໃດລຸນ




- ຮູ້ຈັກການຈັດໃຫ້ເປັນໝວດໝູ່ ໝາຍຄວາມວ່າຄຳສັບດຽວອາດໝາຍເຖິງຫຼາຍໆສິ່ງທີ່ແຕກຕ່າງກັນ ແລະ ຫຼາຍໆຄຳສັບກໍ່ອາດໝາຍເຖິງວັດຖຸສິ່ງດຽວ.




- ຈະແກ້ໄຂບັນຫາໄດ້ແນວໃດ.




- ຮູ້ຈັກການນັບ.




- ຮູ້ຈັກອະທິບາຍຄວາມຮູ້ສຶກຂອງຄົນອື່ນ ແລະ ເຂົ້າໃຈເຫດຜົນວ່າ ເປັນຫຍັງພວກເຂົາຈຶ່ງຮູ້ສຶກແບບນັ້ນ.




ສິ່ງສຳຄັນຕ້ອງເຮັດໃຫ້ການຮຽນຮູ້ພາສາກາຍເປັນພາກສ່ວນໜຶ່ງຂອງຊີວິດຂອງເດັກຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນ. ຜູ້ເປັນພໍ່ແມ່, ຄົນອ້ອມຂ້າງ ແລະ ຄູອາຈານ ຕ້ອງກະຕຸກຊຸກຍູ້ໃຫ້ເດັກໄດ້ຮຽນ ແລະ ໝູນໃຊ້ພາສາ ເພື່ອສະແດງອອກເຖິງຄວາມຮູ້ສຶກຂອງພວກເຂົາ, ເພື່ອສື່ສານກັບຄົນອື່ນ ແລະ ພັດທະນາທັກສະໃນການຄິ້ນຄິດຂອງເຂົາເຈົ້າ.

# ພາສາມື ແລະ ພາສາເວົ້າ

ພາສາ 2 ປະເພດທີ່ເດັກນ້ອຍຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນ ສາມາດຮຽນປະກອບມີຄື:

- ພາສາມື ໝາຍເຖິງການໃຊ້ມື ສ້າງສັນຍະລັກຕ່າງໆ ເພື່ອສື່ສານກັບຄົນຫູໜວກ ພາຍໃນຊຸມຊົນ, ຂົງເຂດ ຫຼື ປະເທດທີ່ພວກເຂົາອາໄສຢູ່.
- ພາສາເວົ້າ ໝາຍເຖິງການໃຊ້ສຽງ ແລະ ການອ່ານຮີມສົບ ເພື່ອສື່ສານໃນຂົງເຂດ ຫຼື ໃນປະເທດນັ້ນ.

ເດັກນ້ອຍບາງກຸ່ມທີ່ສາມາດໄດ້ຍິນແຕ່ເລັກນ້ອຍ ສາມາດເວົ້າ ແລະ ອ່ານຮີມສົບໄດ້. ແຕ່ເດັກນ້ອຍຈຳນວນໜຶ່ງ ຜັດສາມາດສື່ສານໂດຍຜ່ານການສ້າງສັນຍະລັກດ້ວຍມືໄດ້ດີກວ່າ. ທ່ານອາດສາມາດສອນພາສາປະເພດໃດໜຶ່ງໃນເບື້ອງຕົ້ນກ່ອນ ຫຼັງຈາກນັ້ນ ຈຶ່ງສອນພາສາໜຶ່ງກໍ່ໄດ້ ເມື່ອເດັກໃຫຍ່ຂຶ້ນ.

**ຍົກຕົວຢ່າງ:**

ຫຼາຍທ່ານອາດເລີ່ມຕົ້ນຈາກການໃຊ້ທ່າທາງ ແລະ ສັນຍະລັກກັບເດັກທີ່ຍັງນ້ອຍ, ໂດຍສະເພາະແມ່ນເມື່ອທ່ານຍັງບໍ່ໝັ້ນໃຈວ່າ ເດັກຜູ້ນັ້ນສາມາດໄດ້ຍິນສຽງປາກເວົ້າຫຼືບໍ່. ເມື່ອເດັກໃຫຍ່ຂຶ້ນ ແລະ ສາມາດເຂົ້າໃຈບາງສັນຍະລັກ. ທ່ານອາດລອງສອນໃຫ້ພວກເຂົາອ່ານຮີມສົບ ແລະ ຮຽນເວົ້າ.

ບາງຄົນອາດເລີ່ມຕົ້ນດ້ວຍການເວົ້າ ແລະ ການອ່ານຮີບສົບ ແຕ່ຖ້າທ່ານສາມາດຮູ້ໄດ້ວ່າເດັກນ້ອຍຜູ້ນັ້ນສາມາດໄດ້ຍິນສຽງຈຳນວນໜຶ່ງ ຫຼື ເຂົາຫູໜວກຫຼັງຈາກທີ່ເຂົາຮູ້ເວົ້າແລ້ວນັ້ນ, ທ່ານອາດເລີ່ມຕົ້ນດ້ວຍການສອນໃຫ້ເວົ້າ ແລະ ຮຽນຮູ້ການອ່ານຮີມສົບກ່ອນກໍ່ໄດ້ ແລະ ຖ້າຫາກເຂົາເຈົ້າຫາກບໍ່ສາມາດຮຽນ "ພາສາເວົ້າ" ໄດ້ໂດຍຜ່ານການຮຽນໄລຍະໜຶ່ງ, ກໍ່ສະແດງວ່າການສອນພາສາມື ໜ້າຈະເໝາະສົມກັບເດັກຜູ້ນັ້ນກວ່າ.







**ປະເພດພາສາທີ່ເດັກຄວນຮຽນແມ່ນອີງໃສ່:**

- ເດັກຜູ້ນັ້ນສາມາດໄດ້ຍິນຫຼາຍ ຫຼື ໜ້ອຍປານໃດ.
- ພາສາປະເພດໃດທີ່ເຂົາມັກ.
- ພວກທ່ານເຂົ້າໃຈແນວໃດ ກ່ຽວກັບການຫູໜວກຂອງເຂົາເຈົ້າ.
- ເມື່ອໃດ ທີ່ເຂົາເລີ່ມມີບັນຫາໃນການໄດ້ຍິນ.
- ອຸປະກອນ, ຂໍ້ມູນ, ສະຖານທີ່ ສາມາດຕອບສະໜອງສຳລັບຄົນຫູໜວກ ທີ່ມີຢູ່ໃນຄອບຄົວ ຫຼື ຊຸມຊົນຂອງທ່ານ.

# ການນຳໃຊ້ພາສາມື

ພາສາມືຖືກນຳໃຊ້ໂດຍຄົນຫູໜວກທົ່ວໄປ. ມັນແມ່ນພາສາທີ່ອາໄສການຈັດວາງມື, ການເໜັງຕີງຂອງຮ່າງກາຍ, ການໃຊ້ທ່າທາງ ແລະ ສີໜ້າ ເພື່ອສື່ສານປະສົບການ, ຄວາມຄິດ, ຄວາມຕ້ອງການ ແລະ ຄວາມຮູ້ສຶກໃຫ້ຄົນອື່ນຮັບຮູ້. ພາສາມືລວມເອົາການໃຊ້ທ່າທາງແບບທຳມະດາ ໄປຈົນເຖິງບັນດາສັນຍະລັກຕ່າງໆ ນັບພັນໆຢ່າງທີ່ຄົນຫູໜວກໄດ້ໃຊ້ເວລາຄົ້ນຄິດ ແລະ ພັດທະນາມາເປັນເວລາດົນແລ້ວ.




ພາສາມືກໍ່ແມ່ນພາສາທີ່ແທ້ຈິງອີກປະເພດໜຶ່ງ ເຊິ່ງມີຫຼັກໄວຍາກອນ ແລະ ໂຄງສ້າງທີ່ມີການຈັດລຽງຄັກແນ່ ຄືກັນກັບພາສາເວົ້າ. ພວກເຂົາໃຊ້ພາສາມື ເພື່ອຖາມຄຳຖາມ ທີ່ມີຄວາມສັບຊ້ອນ, ພັນລະນາສິ່ງຕ່າງໆ ທີ່ຢູ່ອ້ອມຂ້າງຕົວພວກເຂົາ, ສົນທະນາກ່ຽວກັບສາຍພົວພັນ, ທັດສະນະຄະຕິ ແລະ ຄວາມເຊື່ອ. ຄົນຫູໜວກສາມາດໃຊ້ພາສາມືເພື່ອສົນທະນາກ່ຽວກັບຜົນກະທົບຈາກສິ່ງອ້ອມຂ້າງທີ່ມີຕໍ່ພວກເຂົາ, ອາດກ່າວເຖິງກາລະໃນອະດີດ ຫຼື ໃນອະນາຄົດກໍ່ໄດ້. ສຳລັບຜູ້ທີ່ນຳໃຊ້ພາສາມືໄດ້ຢ່າງຄົບຖ້ວນ ຈະສາມາດສື່ສານກ່ຽວກັບສິ່ງຕ່າງໆໄດ້ຄືກັນກັບຄົນ ທີ່ໄດ້ຍິນປົກກະຕິ ແລະ ເໝືອນກັບການສື່ສານໂດຍໃຊ້ພາສາເວົ້າຂອງຄົນທົ່ວໄປ.

ແຕ່ມີສິ່ງໜຶ່ງທີ່ພາສາມືອາດແຕກຕ່າງກັບພາສາເວົ້າທົ່ວໄປ ອາດຈະແມ່ນການຈັດລຳດັບຂອງປະໂຫຍກໃນພາສາມື ເຊິ່ງຈະແຕກຕ່າງກັບຄຳສັບໃນພາສາເວົ້າທົ່ວໄປ.

**ຕົວຢ່າງ:** ໃນຄຳຖາມ "ຊື່ຂອງເຈົ້າແມ່ນຫຍັງ?" ຈະມີລັກສະນະແບບນີ້ ສຳລັບພາສາມືໃນປະເທດລາວມີຫຼາຍພາກສ່ວນ.




ຄົນຫູໜວກເກືອບທຸກໆປະເທດໃນໂລກ ໄດ້ປະດິດພາສາມືທີ່ສົມບູນຂອງປະເທດຕົນ ຄື ກັນກັບພາສາເວົ້າທົ່ວໄປ, ພາສາມືກໍ່ມີຄວາມແຕກຕ່າງກັນໄປໃນແຕ່ລະຂົງເຂດ ແລະ ແຕ່ລະປະເທດ.

ນີ້ແມ່ນຕົວຢ່າງຂອງພາສາໃບ້ ສຳລັບ ຄຳວ່າ "ແມ່" ຢູ່ໃນສາມປະເທດທີ່ແຕກຕ່າງກັນ.




ເຖິງວ່າຈະມີຄວາມແຕກຕ່າງກັນກໍ່ຕາມ, ແຕ່ພາສາມືແຕ່ລະແບບ ກໍ່ເປັນວິທີທາງສື່ສານທີ່ຄົບຖ້ວນສົມບູນ ແລະ ງ່າຍດາຍສຳລັບຄົນຫູໜວກ.

## ຄຸນປະໂຫຍດຂອງການໝູນໃຊ້ພາສາມື

- ເດັກອາຍຸນ້ອຍຮຽນພາສາມືໄດ້ຢ່າງງ່າຍດາຍ ເມື່ອພວກເຂົາເປີດຮັບເອົາມັນ. ໂດຍຜ່ານການຝຶກແອບ ແລະ ມັນບໍ່ມີຄວາມຫຍຸ້ງຍາກຫຼາຍປານໃດ ໃນການຮຽນຮູ້ພາສາມືສໍາລັບເດັກອາຍຸໃກ້ໄວລຸ້ນ ແລະ ເດັກໄວລຸ້ນ.



- ເດັກນ້ອຍທີ່ໃຊ້ພາສາມືໃນການສື່ສານກັບຄົນອື່ນທີ່ຮູ້ຈັກພາສາມືຄືກັນ ສາມາດສື່ສານຄວາມໝາຍໄດ້ຢ່າງຄົບຖ້ວນ ຄືກັນກັບເດັກຫູດີ ທີ່ສື່ສານໂດຍພາສາເວົ້າປົກກະຕິ, ເດັກທີ່ຫູໜວກທີ່ຮູ້ໃຊ້ພາສາມື ຈະສາມາດຮູ້ຈັກກັບຄົນຫູໜວກຄົນອື່ນໆ ໂດຍໝູນໃຊ້ພາສາມື ແລະ ຮຽນຮູ້ວ່າ ຄົນຫູໜວກ ກໍ່ເປັນກຸ່ມຄົນທີ່ສໍາຄັນໃນຊຸມຊົນ.
- ສໍາລັບເດັກຫູໜວກ ທີ່ຈະຮຽນຮູ້ການອ່ານ ແລະ ຂຽນພາສາມືຂອງຂົງເຂດຂອງຕົນ ອາດຈະງ່າຍກວ່າ. ແຕ່ເດັກກໍ່ຄວນຮຽນຮູ້ພາສາມືຂອງຂົງເຂດອື່ນນໍາ. ຍິ່ງຮູ້ຈັກພາສາຫຼາຍເທົ່າໃດ ກໍ່ຈະເປັນເລື່ອງງ່າຍສໍາລັບການຮຽນຮູ້ພາສາອື່ນອີກເທົ່ານັ້ນ.
- ເຖິງແມ່ນວ່າມີພາສາມືທີ່ແຕກຕ່າງກັນໃນທົ່ວໂລກ ແຕ່ກໍ່ສາມາດເຂົ້າໃຈກັນໄດ້ງ່າຍກວ່າ ຄົນປົກກະຕິທີ່ໝູນໃຊ້ພາສາເວົ້າທົ່ວໄປ ເຊັ່ນ: ເດັກທີ່ໃຊ້ພາສາມືໃນປະເທດຈີນ ສາມາດເຂົ້າໃຈ ແລະ ສື່ສານກັບເດັກທີ່ໃຊ້ພາສາມືທີ່ມາຈາກ ປະເທດ ນິກາລາກົວ ໄດ້ດີກວ່າຄົນຫູດີທົ່ວໆໄປ ຈາກປະເທດທັງສອງທີ່ຈະສື່ສານກັນ.

## ຂໍ້ຫຍຸ້ງຍາກສໍາລັບການໝູນໃຊ້ພາສາມື

- ເດັກທີ່ໃຊ້ພາສາມືບໍ່ສາມາດສື່ສານກັບຜູ້ຄົນທີ່ບໍ່ຮູ້ຈັກ. ຖ້າຕ້ອງການສື່ສານກັບເດັກຫູໜວກທີ່ໃຊ້ພາສາມື ສະມາຊິກໃນຄອບຄົວ, ໝູ່ເພື່ອນ ແລະ ຄົນອື່ນໆໃນຊຸມຊົນ ຈໍາຕ້ອງໄດ້ຮຽນຮູ້ພາສາມືນໍາ.
- ໃນເມື່ອເດັກຫູໜວກສາມາດໃຊ້ພາສາມືໄດ້ຢ່າງສະດວກ, ຜູ້ໃຫຍ່ກໍ່ຕ້ອງຮຽນຮູ້ພາສາມືໃຫ້ຫຼາຍ ແລະ ຄົບຖ້ວນຍິ່ງຂຶ້ນໄປອີກ.
- ຖ້າຫາກຄອບຄົວຂອງເດັກຫູໜວກ ຫາກຢູ່ໃນຊຸມຊົນທີ່ບໍ່ມີຄົນໃຊ້ພາສາມື, ມັນອາດຈະເປັນການຍາກໃນການຊອກຫາອາຈານ ທີ່ສອນພາສາມືໃຫ້ ຫຼື ຍາກໃນການຊອກຫາຄົນທີ່ເດັກຈະສາມາດໃຊ້ພາສານໍາ.



# ການໝູນໃຊ້ພາສາເວົ້າ

ຄົນປົກກະຕິທີ່ໄດ້ຍິນດີ ສື່ສານໂດຍຜ່ານການເວົ້າ ແລະ ການໄດ້ຍິນຄົນອື່ນ ຜ່ານພາສາຂອງຂົງເຂດນັ້ນໆ. ໂດຍປົກກະຕິ, ຄອບຄົວຂອງເດັກຫູໜວກ ກໍ່ຢາກໃຫ້ເດັກສາມາດເຂົ້າໃຈຄຳເວົ້າ ແລະ ເວົ້າກັບພວກເຂົາໂດຍຜ່ານພາສາເວົ້າປົກກະຕິເຊັ່ນກັນ.

**ການຮຽນພາສາເວົ້າສຳລັບເດັກທີ່ບໍ່ໄດ້ຍິນດີອາດຕ້ອງການຄື:**

- ຟັງໂດຍໝູນໃຊ້ຄວາມສາມາດໄດ້ຍິນທີ່ຍັງມີຢູ່ ເພື່ອໃຫ້ເຂົ້າໃຈຄຳເວົ້າ ແລະ ການໝູນໃຊ້ເຄື່ອງຊ່ວຍຟັງ.
- ສັງເກດສົບຂອງຜູ້ເວົ້າ ແລະ ເດົາວ່າ ພວກເຂົາກຳລັງເວົ້າຫຍັງ ໂດຍຜ່ານການອ່ານຮີມສົບ.
- ຝຶກຊ້ອມການອອກສຽງເປັນຄຳເວົ້າ ເພື່ອໃຫ້ຄົນອື່ນເຂົ້າໃຈເດັກ.

ຈົ່ງຈື່ໄວ້ວ່າ ຖ້າທ່ານໃຊ້ພາສາເວົ້າກັບເດັກ, ທ່ານ ແລະ ສະມາຊິກໃນຄອບຄົວຈະຕ້ອງເວົ້າກັບເດັກຜູ້ນັ້ນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້.

ຈົ່ງມີຄວາມອົດທົນ ເດັກຫູໜວກຈະຮຽນຮູ້ພາສາໄດ້ຊ້າກວ່າ ເດັກທີ່ສາມາດໄດ້ຍິນປົກກະຕິ. ທ່ານຕ້ອງເຮັດໃຫ້ເດັກໄດ້ໝູນໃຊ້ຄຳເວົ້າ. ເຖິງແມ່ນວ່າ ທ່ານສາມາດເຮັດສິ່ງໃດສິ່ງໜຶ່ງໃຫ້ເດັກໄດ້ ໂດຍທີ່ເດັກບໍ່ເວົ້າກໍ່ໄດ້ ຫຼື ລໍຖ້າຈົນເດັກຮ້ອງຖາມເສຍກ່ອນ.




ເດັກຫູໜວກອາດມີລັກສະນະການເວົ້າທີ່ແຕກຕ່າງອອກໄປ, ເດັກນ້ອຍຫູໜວກເກືອບທັງໝົດ ເວົ້າແຕກຕ່າງຈາກເດັກນ້ອຍ ຜູ້ທີ່ໄດ້ຍິນປົກກະຕິ. ທ່ານອາດຮູ້ສຶກເຂີນອາຍ ເມື່ອໄດ້ຍິນລັກສະນະສຽງເວົ້າຂອງເດັກຄັ້ງທຳອິດ. ແຕ່ເມື່ອທ່ານລຶ້ງເຄີຍແລ້ວ ທ່ານກໍ່ຄວນອະທິບາຍໃຫ້ຄົນອື່ນເຂົ້າໃຈນຳ.

ແຕ່ລະຂົງເຂດ ແຕ່ລະປະເທດ ມີຄວາມເຂົ້າໃຈກ່ຽວກັບການຮຽນຮູ້ ເພື່ອສື່ສານຂອງເດັກຫູໜວກແຕກຕ່າງກັນອອກໄປ. ໂຮງຮຽນອະນຸບານໃນພາກໃຕ້ຂອງປະເທດອິນເດຍ ພະຍາຍາມສອນໃຫ້ເດັກທີ່ບໍ່ສາມາດໄດ້ຍິນນີ້ໃຫ້ເວົ້າ, ອ່ານ, ຂຽນ ແລະ ຟັງ.

ພວກເຂົາກະກຽມໃຫ້ເດັກຫູໜວກ ສາມາດເຂົ້າຮຽນໃນໂຮງຮຽນທົ່ວໄປໄດ້ ເມື່ອເຂົາເຈົ້າອາຍຸ 5 ປີ. ພວກເຂົາແນະນຳໃຫ້ເດັກນ້ອຍຫູໜວກ ໃສ່ເຄື່ອງຊ່ວຍຟັງ ທີ່ມີຖົງແບບຕິດກັບໂຕ, ເພາະໂຮງຮຽນບໍ່ຕ້ອງການໃຫ້ເດັກຮູ້ສຶກອາຍວ່າຕົນຫູໜວກ. ເຄື່ອງຊ່ວຍຟັງນອກຈາກຈະຊ່ວຍໃຫ້ເດັກໄດ້ຍິນສຽງດັງຂຶ້ນແລ້ວ ຍັງຊ່ວຍໃຫ້ຄົນອື່ນໆເຫັນ ແລະ ຍອມຮັບວ່າ ເດັກເຫຼົ່ານີ້ແມ່ນມີຄວາມແຕກຕ່າງ.



*ນີ້ແມ່ນເດັກທີ່ໃຊ້ເຄື່ອງຊ່ວຍຟັງ ເຊິ່ງໃສ່ໃນຖົງແບບກັບຕົວຕົນຂອງເດັກ.*

## ຄຸນປະໂຫຍດຈາກການຮຽນພາສາເວົ້າ

- ຖ້າເດັກສາມາດສື່ສານກັບຄົນອື່ນໃນສັງຄົມ ຄົນອື່ນໆອີກຫຼາຍຄົນກໍ່ຈະສາມາດເຂົ້າໃຈເຂົາ.
- ເດັກຫູໜວກທີ່ສາມາດໝູນໃຊ້ພາສາເວົ້າ ແມ່ນພ້ອມສຳລັບການເຂົ້າຮຽນໃນໂຮງຮຽນທີ່ບໍ່ໄດ້ໃຊ້ພາສາມື.
- ເດັກທີ່ໃຊ້ພາສາເວົ້າຈະສາມາດອ່ານງ່າຍຂຶ້ນ ເພາະພາສາທີ່ເຂົາເວົ້າ ແລະ ຂຽນແມ່ນຄ້າຍຄືກັນ.




## ຂໍ້ຫຍຸ້ງຍາກສຳລັບການໝູນໃຊ້ພາສາເວົ້າ

- ການສື່ສານໂດຍຜ່ານພາສາເວົ້ານີ້ ສາມາດໃຊ້ໄດ້ແຕ່ສະເພາະເດັກທີ່ຍັງມີຄວາມສາມາດໃນການໄດ້ຍິນຢູ່ສ່ວນໜຶ່ງ (ພຽງພໍທີ່ຈະໄດ້ຍິນ ແລະ ຈຳແນກຄວາມແຕກຕ່າງຂອງບັນດາຄຳສັບ) ຫຼື ສຳລັບເດັກທີ່ຫູເລີ່ມໜວກ ຫຼັງຈາກທີ່ເຂົາໄດ້ຮຽນການປາກເວົ້າແລ້ວ.
- ເດັກອາດມີຄວາມສັບສົນໃນການອ່ານຮີມສົບ ເພາະມີຫຼາຍສຽງທີ່ເບິ່ງຄ້າຍຄືກັນ ເມື່ອເຮົາສັງເກດສົບ ຫຼື ສຽງທີ່ບໍ່ສາມາດສັງເກດໄດ້ຈາກສົບ ຍົກຕົວຢ່າງ: ຄຳສັບໃນພາສາລາວ “ປີໃໝ່” ແລະ “ມີໃບ” ທັງໝົດແມ່ນເບິ່ງຄືກັນ. ທ່ານສາມາດສັງເກດເບິ່ງເອງໄດ້ໂດຍຜ່ານແວ່ນ.
- ເດັກທີ່ມີບັນຫາໃນການໄດ້ຍິນ ຈະບໍ່ສາມາດອອກສຽງໄດ້ຢ່າງຈະແຈ້ງ ເພາະເຂົາເອງກໍ່ບໍ່ສາມາດໄດ້ຍິນສຽງຂອງເຂົາ ແລະ ຄົນອື່ນໆອາດຈະບໍ່ເຂົ້າໃຈສຽງເວົ້າຂອງເຂົາ ຍົກເວັ້ນ ສະມາຊິກໃນຄອບຄົວເທົ່ານັ້ນ.
- ເດັກອາຍຸນ້ອຍໆ ອາດມີບັນຫາໃນການນັ່ງຮຽນພາສາໃນໄລຍະເວລາດົນໆ.
- ເມື່ອເດັກຕັ້ງໃຈແຕ່ຮຽນຮູ້ ການເວົ້າ ແລະ ຮຽນແຕ່ເບິ່ງວ່າຄົນອື່ນເວົ້າຫຍັງ. ຈະເຮັດໃຫ້ເດັກຂາດການຮຽນຮູ້ກ່ຽວກັບໂລກພາຍນອກ.

ຄຳສັບ “ເບບີ“, “ເມບີ“ ແລະ “ເພມີ“ ແມ່ນເບິ່ງຄືກັນໂດຍເບິ່ງຈາກຮີມສົບ.



# ສິ່ງທີ່ຄວນຄິດເຖິງ

ເນື່ອງຈາກວ່າ ແຕ່ລະຄອບຄົວ, ເດັກແຕ່ລະຄົນ ແມ່ນມີຄວາມແຕກຕ່າງກັນໃນດ້ານຄວາມສາມາດ ແລະ ຄວາມຕ້ອງການ, ສະນັ້ນ ຈຶ່ງບໍ່ມີວິທີການໃດໜຶ່ງ ທີ່ເໝາະສົມກັບທຸກໆຄົນ. ສິ່ງສຳຄັນທີ່ສຸດແມ່ນການໝູນໃຊ້ແຫຼ່ງຂໍ້ມູນທີ່ທ່ານມີ. ໃນ 2-3 ໜ້າຕໍ່ໄປນີ້ຈະໃຫ້ຂໍ້ມູນ ແລະ ຄຳຖາມຈຳນວນໜຶ່ງ ເຊິ່ງຈະຊ່ວຍໃຫ້ການສອນພາສາໃຫ້ເດັກຫູໜວກຂອງທ່ານ ໄດ້ຮັບຜົນດີ.

## ພາສາມື

**ອາດຈະປະສົບຜົນສຳເລັດຖ້າ:**

- ຄອບຄົວຂອງທ່ານຮູ້ໃຊ້ພາສາມື ຫຼື ມີເຈຕະນາ ທີ່ຈະຮຽນພາສາໃບ້.
- ມີບຸກຄົນ ຫຼື ປຶ້ມທີ່ສາມາດສອນພາສາມື ໃຫ້ເດັກຫູໜວກ ແລະ ຄອບຄົວຂອງທ່ານ.
- ມີໂຮງຮຽນສຳລັບຄົນຫູໜວກທີ່ສອນພາສາມືໃນເຂດອາໄສຂອງທ່ານ.



**ອາດຈະປະສົບຜົນສຳເລັດຍິ່ງຂຶ້ນຖ້າ:**

- ຄອບຄົວຂອງທ່ານຫາກມີຄວາມອົດທົນ ແລະ ສະມາຊິກໃນຄອບຄົວທຸກໆຄົນ ຮ່ວມຈິດຮ່ວມໃຈກັນຮຽນຮູ້ ແລະ ໃຊ້ພາສາມື.
- ມີບຸກຄົນທີ່ສາມາດສອນພາສາມື ທີ່ໃຊ້ໃນທ້ອງຖິ່ນຂອງທ່ານ ໄດ້ຢ່າງຄົບຖ້ວນໃຫ້ແກ່ລູກ ແລະ ຄອບຄົວຂອງທ່ານ.

## ພາສາເວົ້າ

**ອາດຈະປະສົບຜົນສຳເລັດຖ້າ:**

- ລູກຂອງທ່ານສາມາດໄດ້ຍິນສຽງຂອງບາງຄຳເວົ້າ.
- ລູກຂອງທ່ານຮຽນເວົ້າ ແລະ ທຳຄວາມເຂົ້າໃຈຄຳເວົ້າກ່ອນທີ່ລາວຈະເສຍການໄດ້ຍິນ.
- ລູກຂອງທ່ານສາມາດອ່ານຮີບສົບໄດ້ງ່າຍຂຶ້ນ (ເດັກບາງຄົນເຮັດມັນໄດ້ດີກວ່າຄົນອື່ນ).

**ອາດຈະປະສົບຜົນສຳເລັດຍິ່ງຂຶ້ນຖ້າ:**

- ລູກຂອງທ່ານມີເຄື່ອງຊ່ວຍຟັງຫູ ເຊິ່ງລາວນຳໃຊ້ມັນເກືອບຕະຫຼອດເວລາ.
- ລູກຂອງທ່ານໄດ້ຮັບການຊ່ວຍເຫຼືອຈາກຜູ້ຊ່ຽວຊານດ້ານການແພດທີ່ຄລີນິກ ຫຼື ໂຮງຮຽນກິນນອນສຳລັບເດັກຫູໜວກ.



## ແມ່ນໃຜແດ່ທີ່ລູກຂອງທ່ານຈະສາມາດສື່ສານນຳໄດ້?

ເດັກທີ່ມີບັນຫາໃນການໄດ້ຍິນ ຄວນໄດ້ສື່ສານກັບຄົນອື່ນໆ ເຊິ່ງເປັນສິ່ງທີ່ສຳຄັນ. ເດັກທີ່ຮຽນຮູ້ແຕ່ພາສາມືທີ່ໃຊ້ສະເພາະໃນຄອບຄົວຈະສາມາດສື່ສານໄດ້ແຕ່ນຳສະມາຊິກໃນຄອບຄົວເທົ່ານັ້ນ. ເດັກທີ່ຮຽນຮູ້ການໃຊ້ພາສາມື ຫຼື ພາສາເວົ້າ (ການອ່ານຮີມສົບ) ທີ່ສົມບູນຈະມີຄວາມສາມາດສື່ສານກັບຄົນອື່ນໆໄດ້ຫຼາຍຂຶ້ນ. ໂດຍສະເພາະແມ່ນເດັກທີ່ສາມາດອ່ານ ແລະ ຂຽນ ພາສາເວົ້າຂອງທ້ອງຖິ່ນນັ້ນ ກໍ່ຍິ່ງສາມາດສື່ສານກັບຄົນອື່ນໄດ້ດີຂຶ້ນຕື່ມ.



*ໃຫ້ທຸກໆຄົນໃຊ້ພາສາມືເມື່ອເດັກມີໜ້າຢູ່ທີ່ນັ້ນ.*

ບໍ່ວ່າທ່ານຈະນຳໃຊ້ພາສາມື ຫຼື ພາສາເວົ້າ, ມັນມີຄວາມສຳຄັນ ທີ່ທຸກໆຄົນໃນຄອບຄົວຕ້ອງໝູນໃຊ້ນຳກັນ. ວິທີນີ້ຈະຊ່ວຍໃຫ້ເດັກສາມາດສື່ສານກັບສະມາຊິກໃນຄອບຄົວໄດ້ທຸກໆຄົນ. ເຂົາຈະຮູ້ສຶກວ່າ ຕົນເອງກໍ່ເປັນສ່ວນໜຶ່ງຂອງຄອບຄົວ ແລະ ຮຽນຮູ້ສິ່ງຕ່າງໆໂດຍຜ່ານການສົນທະນາ.

ຄົນທີ່ບໍ່ມີບັນຫາໃນການໄດ້ຍິນ ສາມາດຮຽນຮູ້ການໃຊ້ພາສາມືໄດ້ ຖ້າພວກເຂົາຕ້ອງການ.

## ຈະເປັນແນວໃດ ຖ້າພາສາທຳອິດທີ່ລູກທ່ານຮູ້ບໍ່ແມ່ນພາສາຂອງທ່ານ?

ການໝູນໃຊ້ພາສາທີ່ຄືກັນ ຊ່ວຍໃຫ້ພວກເຮົາສາມາດສື່ສານກັນ. ແຕ່ສ່ວນຫຼາຍພາສາມື ທີ່ເດັກຫູໜວກໃຊ້ເພື່ອພັດທະນາ ຈິດໃຈ ແລະ ຮຽນຮູ້ສິ່ງຕ່າງໆນັ້ນ ຜັດບໍ່ແມ່ນພາສາ ທີ່ຄອບຄົວຂອງເຂົາໃຊ້. ພໍ່ແມ່ຫຼາຍຄົນທີ່ໝູນໃຊ້ພາສາຕ່າງກັບລູກ ພົບຄວາມຫຍຸ້ງຍາກໃນການສື່ສານກັບລູກຂອງພວກເຂົາທີ່ຫູໜວກ. ພວກເຂົາອາດຈະຮູ້ສຶກບໍ່ໃກ້ຊິດກັນ ແລະ ຮູ້ສຶກໝົດຫວັງ ເພາະວ່າມັນຫຍຸ້ງຍາກຫຼາຍ ໃນການສື່ສານ ແລະ ເດັກຫູໜວກອາດຮູ້ສຶກວ່າ ຕົນເອງບໍ່ແມ່ນສ່ວນໜຶ່ງຂອງຄອບຄົວ.

ພາສາມືອາດເປັນສິ່ງທີ່ດີທີ່ສຸດສຳລັບເດັກຫູໜວກ ແຕ່ອາດຈະຫຍຸ້ງຍາກສຳລັບສະມາຊິກໃນຄອບຄົວ. ພາສາມືບາງຄັ້ງອາດດຶງຄວາມສົນໃຈຂອງເດັກໄປໃນທາງອື່ນ. ເຖິງແນວໃດກໍ່ຕາມ, ໂດຍໄດ້ຮັບການຊ່ວຍເຫຼືອຈາກຊຸມຊົນ ພໍ່ແມ່ຂອງເດັກຫູໜວກ ສາມາດຊ່ວຍໃຫ້ລູກຂອງຕົນຮຽນພາສາທີ່ເໝາະສົມກັບພວກເຂົາໄດ້.



## ເມື່ອໃດທີ່ລູກຂອງທ່ານເລີ່ມມີບັນຫາໃນການໄດ້ຍິນ?

ຖ້າລູກຂອງທ່ານຫູໜວກຫຼັງຈາກທີ່ເຂົາຮຽນເວົ້າແລ້ວ, ອາດຈະມີໂອກາດທີ່ເຂົາຈະສາມາດຮຽນຮູ້ການອ່ານຮີມສົບ ແລະ ພັດທະນາການປາກເວົ້າໄດ້. ເດັກຍັງສາມາດສືບຕໍ່ພັດທະນາພາສາຂອງເຂົາ ເຖິງແມ່ນວ່າຈະສູນເສຍຄວາມສາມາດໃນການໄດ້ຍິນໄປແລ້ວ. ແຕ່ຖ້າລູກຂອງທ່ານຫາກຫູໜວກມາຕັ້ງແຕ່ເກີດ ຫຼື ບໍ່ສາມາດໄດ້ຍິນສຽງປາກເວົ້າເລີຍ. ມັນກໍ່ອາດຈະເປັນເລື່ອງຍາກ ຫຼື ເປັນໄປບໍ່ໄດ້ທີ່ຈະຮຽນຮູ້ການອ່ານຮີມສົບ ຫຼື ຮຽນເວົ້າ.




*ເດັກຜູ້ທີ່ຮຽນເວົ້າແລ້ວກ່ອນທີ່ເຂົາຈະສູນເສຍ ການໄດ້ຍິນ ສາມາດເວົ້າໄດ້ດີກວ່າ ເດັກທີ່ຫູໜວກມາແຕ່ກຳເນີດ.*

# ລູກຂອງທ່ານສາມາດໄດ້ຍິນຫຼາຍປານໃດ?

ຖ້າເດັກສາມາດໄດ້ຍິນສຽງປາກເວົ້າໄດ້ຫຼາຍເທົ່າໃດ, ລາວກໍ່ຈະສາມາດເຂົ້າໃຈພາກສ່ວນຂອງຄຳເວົ້າ, ສາມາດອ່ານຮີມສົບ ຫຼື ຮຽນເວົ້າໄດ້ຫຼາຍເທົ່ານັ້ນ. ສ່ວນເດັກຜູ້ຊຶ່ງບໍ່ສາມາດໄດ້ຍິນສຽງປາກເວົ້າ ຈະພົບບັນຫາໃນການຮຽນທັກສະເຫຼົ່ານີ້ ຫຼື ອາດຈະບໍ່ສາມາດຮຽນທັກສະເຫຼົ່ານີ້ໄດ້ເລີຍ.




*ເດັກຄົນນີ້ ບໍ່ສາມາດໄດ້ຍິນສຽງໃດໆເລີຍ. ຈຶ່ງເປັນການຍາກ ຫຼື ອາດເປັນໄປບໍ່ໄດ້ ທີ່ລາວຈະຮຽນອ່ານຮີມສົບ ຫຼື ຮຽນເວົ້າໄດ້.*




*ເດັກຄົນນີ້ສາມາດໄດ້ຍິນສຽງເວົ້າ, ເຂົາອາດສາມາດຮຽນການອ່ານຮີມສົບ ແລະ ຮຽນເວົ້າໄດ້.*

# ລູກຂອງທ່ານຈຳຕ້ອງໃຊ້ເຄື່ອງຊ່ວຍຟັງບໍ?

ເຄື່ອງຊ່ວຍຟັງອາດຊ່ວຍໃຫ້ລູກຂອງທ່ານເຂົ້າໃຈຄຳສັບ. ແຕ່ເຄື່ອງຊ່ວຍຟັງບໍ່ສາມາດ ຊ່ວຍເດັກໄດ້ທັງໝົດ. ບາງຄັ້ງຜູ້ຊ່ຽວຊານທາງດ້ານສຸຂະພາບ ອາດແນະນຳໃຫ້ລູກຂອງທ່ານໃສ່ເຄື່ອງຊ່ວຍຟັງ. ຈົ່ງພະຍາຍາມຊອກຫາຄຳແນະນຳຈາກພໍ່ແມ່ຜູ້ອື່ນທີ່ມີລູກ ທີ່ໃຊ້ເຄື່ອງຊ່ວຍຟັງ ແລະຈື່ຈຳວ່າ ເດັກນ້ອຍແຕ່ລະຄົນ ມີຄວາມສາມາດໄດ້ຍິນບໍ່ຄືກັນ.

ຜູ້ຂາຍເຄື່ອງຊ່ວຍຟັງອາດໃຫ້ຂໍ້ມູນຈຳນວນໜຶ່ງກ່ຽວກັບເຄື່ອງດັ່ງກ່າວ. ແຕ່ຄຳແນະນຳຈາກພວກເຂົາບໍ່ດີສະເໝີໄປ. ພວກເຂົາອາດສົນໃຈແຕ່ເຮັດແນວໃດຈະຂາຍສິນຄ້ານັ້ນໄດ້ ໂດຍບໍ່ສົນໃຈວ່າ ຜະລິດຕະພັນໂຕໃດ ທີ່ເໝາະສົມກັບລູກຂອງທ່ານ. ບາງເທື່ອທາງຮ້ານຂາຍເຄື່ອງຊ່ວຍຟັງ ກໍ່ອາດໃຫ້ລູກຂອງທ່ານລອງໃສ່ເຄື່ອງຊ່ວຍຟັງກ່ອນປະມານ 2-3 ມື້ ຫຼື ເປັນອາທິດກ່ອນທີ່ຈະຕັດສິນໃຈຊື້.




*ເຄື່ອງຊ່ວຍຟັງອາດຈະຊ່ວຍລູກຂອງທ່ານໄດ້ ຫຼື ບໍ່ໄດ້ກໍ່ມີ. ຈົ່ງຢ່າປ່ອຍໃຫ້ຄົນອື່ນມາກົດດັນໃຫ້ທ່ານຊື້ ຫຼື ເຮັດໃຫ້ຮູ້ສຶກຜິດທີ່ບໍ່ຊື້ໃຫ້ລູກຂອງທ່ານ.*

# ຂ້ອຍຈະຮູ້ໄດ້ແນວໃດວ່າລູກຂ້ອຍກຳລັງຮຽນ?

ອາດກິນເວລາດົນ ກ່ອນທີ່ທ່ານຈະຮູ້ວ່າລູກມີຄວາມຄືບໜ້າ ໃນການຮຽນພາສາບໍ່. ຫຼັງຈາກທ່ານໄດ້ພະຍາຍາມສອນພາສາໃຫ້ເດັກເປັນເວລາຫຼາຍເດືອນ ຫຼື ຫຼາຍກວ່ານັ້ນ, ຈົ່ງປະເມີນວ່າ ເດັກມີຄວາມຄືບໜ້າບໍ່ ໂດຍຖາມຄຳຖາມເຫຼົ່ານີ້ ກັບຕົວທ່ານເອງ:

- ລູກຂອງຂ້ອຍເຂົ້າໃຈຫຼາຍຂຶ້ນກວ່າທີ່ຜ່ານມາບໍ?
- ລູກຂອງຂ້ອຍໃຊ້ຄຳເວົ້າ ຫຼື ພາສາໃບ້ເລື້ອຍໆຂຶ້ນກວ່າແຕ່ກ່ອນບໍ?
- ລູກມີຄວາມສົນໃຈໃນການຮຽນ ເພື່ອການສື່ສານບໍ?, ຫຼືລູກຍິ່ງມີຄວາມສັບສົນຂຶ້ນກວ່າເກົ່າ?
- ລູກຂອງຂ້ອຍມີບັນຫາໃນດ້ານການປະພຶດທີ່ເກີດຈາກຄວາມສັບສົນ ຍ້ອນບໍ່ເຂົ້າໃຈພາສາ ຫຼື ບໍ? ຫຼື ຍ້ອນຮູ້ພາສາຍັງບໍ່ພຽງພໍ ທີ່ຈະເຂົ້າໃຈຜູ້ອື່ນ ແລະ ສະແດງຄວາມຮູ້ສຶກຂອງຕົນ?
- ຂ້ອຍມີຄວາມສຸກກັບການສື່ສານກັບລູກຂອງຂ້ອຍບໍ ຫຼື ມີແຕ່ຄວາມສັບສົນເມື່ອສື່ສານກັນ?
- ພວກເຮົາສາມາດສື່ສານກັນໄດ້ຢ່າງງ່າຍດາຍ ຈົນຂ້ອຍສາມາດສົນທະນາກັບລູກວ່າມີຫຍັງແດ່ທີ່ກຳລັງເກີດຂຶ້ນບໍ?
- ລູກຂ້ອຍສາມາດສື່ສານກັບຄົນອື່ນໆໄດ້ດີ ຫຼື ບໍ?
- ລູກຂອງຂ້ອຍສາມາດເຂົ້າໃຈຂໍ້ມູນຂ່າວສານ ທີ່ອ້າຍເອື້ອຍຂອງເຂົາເຂົ້າໃຈໄດ້ ຫຼື ບໍ?

ສິ່ງທີ່ຜູ້ເປັນພໍ່ແມ່ມັກຖືກແນະນຳຢູ່ສະເໝີ ຄືໃຫ້ເລືອກປະເພດພາສາໃດໜຶ່ງ ເພື່ອໃຊ້ສື່ສານກັບລູກຂອງຕົນ ແລ້ວກໍ່ໃຊ້ແຕ່ພາສາປະເພດນັ້ນ, ໂດຍບໍ່ສົນໃຈວ່າເດັກມີຄວາມສາມາດຮຽນໄດ້ຫຼາຍໜ້ອຍປານໃດ. ພະນັກງານທີ່ເຮັດວຽກດ້ານນີ້ ສະໜັບສະໜູນແນວຄິດແບບນີ້ ເພາະພວກເຂົາຄິດວ່າ ຖ້າວິທີນີ້ຖືກຕ້ອງ ແລະ ວິທີອື່ນແມ່ນບໍ່ຖືກ. ແຕ່ວ່າບໍ່ມີສິ່ງໃດທີ່ສົມບູນແບບທັງໝົດ.




ຖ້າລູກຂອງທ່ານບໍ່ສາມາດຮຽນ ແລະ ທ່ານຮູ້ສຶກບໍ່ມີທາງອອກ, ຈົ່ງລອງວິທີການໃໝ່. ແຕ່ລະຄອບຄົວຕ້ອງຕັດສິນໃຈ ໂດຍອີງໃສ່ຄວາມສາມາດໃນການໄດ້ຍິນຂອງເດັກຫູໜວກຜູ້ນັ້ນ ແລະ ອີງໃສ່ສະຖານະການຂອງພວກເຂົາເອງ.

# ແມ່ນຜູ້ໃດທີ່ຮູ້ວ່າສິ່ງໃດດີທີ່ສຸດສຳລັບລູກຂອງທ່ານ?

ຫຼາຍໆຄົນມີທັດສະນະທີ່ແນ່ນອນ ກ່ຽວກັບພາສາທີ່ຄວນໃຊ້ກັບເດັກຫູໜວກໃນຫຼາຍໆປະເທດ, ການໃຊ້ພາສາເວົ້າ ກັບເດັກຫູໜວກໄດ້ກາຍເປັນກິດລະບຽບທີ່ໃຊ້ມາຫຼາຍປີແລ້ວ. ຜູ້ຊ່ຽວຊານທາງດ້ານການແພດ ແລະ ການສຶກສາ ອາດບອກທ່ານວ່າ ຄົນຫູໜວກທຸກໆຄົນສາມາດຮຽນເວົ້າໄດ້ ແລະ ພວກເຂົາ ອາດແນະນຳໃຫ້ທ່ານໄດ້ຮູ້ຈັກກັບເດັກຫູໜວກ ທີ່ສາມາດເວົ້າໄດ້ຢ່າງປົກກະຕິກໍ່ຕາມ ເຊິ່ງສິ່ງນີ້ບໍ່ຖືກສະເໝີໄປ.

ຜູ້ຊ່ຽວຊານອາດບອກທ່ານໃນສິ່ງທີ່ພວກເຂົາກໍ່ໄດ້ຖືກສອນມາແນວນັ້ນເຊັ່ນກັນໃນຫຼາຍປີກ່ອນ. ພວກເຂົາອາດບອກໃຫ້ທ່ານໝູນໃຊ້ພາສາເວົ້າກັບລູກຂອງທ່ານ ຫຼື ບອກທ່ານວ່າທ່ານບໍ່ແມ່ນຄົນທີ່ຮັບຜິດຊອບໃນການຕັດສິນໃຈດັ່ງກ່າວ. ຄຳເວົ້າເຊັ່ນນີ້ ແມ່ນບໍ່ຖືກ. ຕົວທ່ານເອງທີ່ຮູ້ຈັກລູກຂອງທ່ານ ແລະ ສະຖານະການພາຍໃນຄອບຄົວຂອງທ່ານໄດ້ດີກວ່າຄົນອື່ນ.



# ໃຊ້ພາສາທີ່ເໝາະສົມກັບລູກຂອງທ່ານ

ລູກຂອງທ່ານຕ້ອງການທີ່ຈະສະແດງອອກທາງດ້ານຄວາມຮູ້ສຶກ ແລະ ເຂົ້າໃຈຄົນອ້ອມຂ້າງ. ເດັກນ້ອຍຕ້ອງຮູ້ຫຼາຍກວ່າ ຄຳສັບທີ່ເວົ້າວ່າ "ພໍ່" ຫຼື "ແມ່". ເດັກຕ້ອງການທີ່ຈະພັດທະນາຄວາມສາມາດໃນການຟັງ, ເຂົ້າໃຈວ່າຄົນອື່ນເວົ້າຫຍັງພ້ອມທັງຕອບພວກເຂົາຄືນ ເພື່ອສື່ສານກັບຄົນອື່ນໆຢ່າງສະດວກສະບາຍ ແລະ ສົມບູນທີ່ສຸດ.







ພໍ່ແມ່ ແລະ ຜູ້ເບິ່ງແຍງຄົນຫູໜວກສາມາດຊ່ວຍໃຫ້ເດັກຮຽນຮູ້ພາສາໄດ້ໂດຍໝູນໃຊ້ວິທີ, ທີ່ເດັກສາມາດຮັບເອົາໄດ້. ຖ້າທ່ານພົບວ່າການຮຽນພາສາມືບໍ່ໄດ້ຜົນສຳລັບເດັກກໍ່ຈົ່ງຊອກວິທີໃຫ້ລາວໄດ້ຮຽນພາສາເວົ້າ. ຫຼືຖ້າເບິ່ງຄືວ່າລາວຈະບໍ່ສາມາດເຂົ້າໃຈພາສາເວົ້າກໍ່ໃຫ້ລອງຮຽນພາສາມືອີກ. ເມື່ອເດັກຮູ້ຈັກ ແລະ ໃຊ້ພາສາໃດໜຶ່ງໄດ້ດີແລ້ວ, ການຮຽນພາສາອື່ນກໍ່ຈະເປັນເລື່ອງງ່າຍສຳລັບເດັກ.

ການໄດ້ໂອ້ລົມກັບພໍ່ແມ່ທີ່ມີລູກຮຽນພາສາມື ຫຼື ພາສາເວົ້າ, ທັງສອງແບບນັ້ນຈະຊ່ວຍໃຫ້ພໍ່ແມ່ຄູ່ອື່ນ ທີ່ກຳລັງຈະສອນພາສາໃຫ້ເດັກໄດ້ມີຄວາມເຂົ້າໃຈຫຼາຍຂຶ້ນ.

ເຖິງແມ່ນວ່າ ເດັກຫູໜວກຈະບໍ່ສາມາດໄດ້ຍິນສຽງຄຳສັບ, ພວກເຂົາກໍ່ຍັງສາມາດຮຽນຮູ້ພາສາຂຽນ. ເດັກຫູໜວກຮຽນຮູ້ວ່າ ຄຳສັບເບິ່ງເປັນແນວໃດ, ແທນທີ່ຈະຮຽນຮູ້ວ່າຄຳສັບມັນມີສຽງແນວໃດ. ພວກເຂົາຮູ້ສາຍພົວພັນກັນລະຫວ່າງສັນຍະລັກຕ່າງໆ (ຄ້າຍຄືກັນກັບການໝູນໃຊ້ພາສາຂຽນຂອງຈີນ). ເດັກນ້ອຍຫູໜວກ ທີ່ຮຽນພາສາຕັ້ງແຕ່ຍັງນ້ອຍໆ ບໍ່ວ່າຈະເປັນພາສາເວົ້າ ຫຼື ພາສາມືກໍ່ຕາມ, ສາມາດຮຽນອ່ານ ແລະ ຂຽນໄດ້ດີ ຈະເປັນປະໂຫຍດໃຫ້ພວກເຂົາທີ່ສຸດ ຖ້າພວກເຂົາໄດ້ພົບກັບຜູ້ໃຫຍ່ຫູໜວກ ທີ່ສາມາດອ່ານໄດ້.

ຄົນຫູໜວກຈຳນວນໜຶ່ງບໍ່ໄດ້ຮຽນຮູ້ເພື່ອສື່ສານຕັ້ງແຕ່ຕອນທີ່ພວກເຂົາຍັງອາຍຸນ້ອຍ. ການຮຽນຕັ້ງແຕ່ອາຍຸນ້ອຍແມ່ນດີກວ່າ, ແຕ່ເດັກທີ່ມີອາຍຸແກ່ຂຶ້ນ ຫຼື ກ້າວສູ່ໄວຜູ້ໃຫຍ່ແລ້ວ ກໍ່ຍັງສາມາດຮຽນຮູ້ ການສື່ສານກັບຄົນອື່ນໄດ້.



# ສະຖານທີ່, ບຸກຄົນທີ່ສາມາດໃຫ້ຄວາມຊ່ວຍເຫຼືອແກ່ພໍ່ແມ່ເດັກ

ການຮຽນຮູ້ພາສາຂອງເດັກຫູໜວກ ແລະ ເດັກທີ່ມີບັນຫາໃນການໄດ້ຍິນ ແມ່ນຂຶ້ນກັບກະໂຕຂອງເດັກເອງ, ສະຖານທີ່, ບຸກຄົນທີ່ຕອບສະໜອງຂໍ້ມູນກ່ຽວກັບເດັກຫູໜວກ, ຄອບຄົວ, ຜູ້ດູແລ ແລະ ຊຸມຊົນທີ່ພວກເຂົາອາໄສຢູ່. ຖ້າທັງພໍ່ແມ່ ແລະ ຜູ້ດູແລຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຊ່ວຍໃຫ້ເດັກຮຽນຮູ້ພາສາຈະເຮັດໃຫ້ການຮຽນມີຜົນດີຂຶ້ນ ແລະ ຍິ່ງຈະດີຂຶ້ນອີກຖ້າຫາກໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງຂອງຊຸມຊົນ, ຈາກໂຮງຮຽນສອນຄົນຫູໜວກ ແລະຈາກອົງການຈັດຕັ້ງອື່ນໆ.

ສະຖານທີ່, ບຸກຄົນພາຍໃນຊຸມຊົນທີ່ສາມາດໃຫ້ຄວາມຊ່ວຍເຫຼືອປະກອບມີ:

- ກຸ່ມຄົນຫູໜວກທີ່ຢູ່ໃນເຂດທີ່ທ່ານອາໄສ, ສະມາຄົມຄົນຫູໜວກ ຫຼື ບຸກຄົນທີ່ສາມາດຊ່ວຍສອນພາສາມືໃຫ້ເດັກ ແລະ ຄອບຄົວຂອງທ່ານ.
- ໂຄງການຟື້ນຟູຄົນພິການທີ່ຕັ້ງຢູ່ຂົງເຂດຂອງທ່ານ, ກຸ່ມສະມາຄົມພໍ່ແມ່ ແລະ ກຸ່ມອື່ນໆ ທີ່ຕັ້ງຢູ່ໃນຊຸມຊົນ.
- ອາຈານຢູ່ໃນໂຮງຮຽນທ້ອງຖິ່ນດັ່ງກ່າວ, ຄົນຫູໜວກອາວຸໂສ ຫຼື ຄົນອື່ນໆທີ່ມີເຈຕະນາ ຢາກສິດສອນເດັກຫູໜວກ.
- ໂຮງຮຽນທີ່ສາມາດສອນເດັກນ້ອຍຫູໜວກໃນຂົງເຂດທີ່ທ່ານອາໄສຢູ່.

ປຶ້ມ ແລະ ວີດີໂອ ທີ່ມີຫົວຂໍ້ກ່ຽວກັບຄວາມສຳຄັນຂອງຄົນຫູໜວກ, ປະສົບການຈາກຊີວິດຂອງຄົນຫູໜວກ ແລະ ບົດເລື່ອງກ່ຽວກັບຄົນຫູໜວກທີ່ປະສົບຄວາມສຳເລັດໃນໜ້າທີ່ວຽກງານ.



ການຮຽນໃຊ້ພາສາມືຍັງຊ່ວຍໃຫ້ເດັກນ້ອຍຫູໜວກ ຮູ້ຈັກກັບຄົນອື່ນໆ ທີ່ຫູໜວກຄືກັນ. ເດັກຈະຮຽນຮູ້ວ່າ ຄົນຫູໜວກກໍ່ເປັນພາກສ່ວນສຳຄັນຂອງສັງຄົມ.

ຖ້າໃນຊຸມຊົນຂອງທ່ານ ມີຄົນຫູໜວກ ທີ່ເປັນຜູ້ ໃຫຍ່ແດ່ແລ້ວ, ຈົ່ງຂໍໃຫ້ລາວຊ່ວຍຫຼິ້ນກັບລູກຂອງທ່ານ ພ້ອມທັງສອນພາສາມືໃຫ້ທ່ານ ແລະ ລູກພ້ອມ.

ແຕ່ຖ້າຫາກບໍ່ມີຄົນຫູໜວກໃນຊຸມຊົນທີ່ທ່ານອາໄສ ຢູ່, ກໍ່ໃຫ້ລອງພົວພັນນຳອົງການຄົນຫູໜວກຂອງປະ ເທດພວກທ່ານ ຫຼື ໂຮງຮຽນສອນຄົນຫູໜວກກໍ່ໄດ້. ລອງຊອກປຶ້ມທີ່ຊ່ວຍໃຫ້ທ່ານຮຽນຮູ້ພາສາມື. ຖ້າ ຫາກວ່າເປັນໄປບໍ່ໄດ້ ກໍ່ຈົ່ງສືບຕໍ່ໃຊ້ພາສາມື ແລະ ທ່າ ທາງຂອງທ່ານ ທີ່ປະດິດຂຶ້ນ ແລະ ພະຍາຍາມສ້າງ ສັນຍະລັກໃໝ່ ດ້ວຍຕົວຂອງທ່ານເອງ.




ສິ່ງສຳຄັນແມ່ນຕ້ອງພະຍາຍາມສື່ສານກັບເດັກຫູໜວກໃຫ້ ຫຼາຍເທົ່າທີ່ຈະເຮັດໄດ້. ສຳຄັນໄປກວ່ານັ້ນ ແມ່ນເດັກນ້ອຍຕ້ອງ ການໃຫ້ທ່ານຮັກພວກເຂົາ, ກະຕຸກຊຸກຍູ້ພວກເຂົາ ແລະ ໃຫ້ ທິດທາງແກ່ພວກເຂົາ. ສິ່ງນີ້ຈະເຮັດໃຫ້ພາສາກາຍເປັນພາກ ສ່ວນໜຶ່ງຂອງຊີວິດເດັກ.



*ລູກຂອງທ່ານຄວນຮູ້ນຳວ່າ ຄວາມຮັກ ແລະ ການຍອມຮັບຂອງທ່ານທີ່ມີຕໍ່ລາວ ແມ່ນບໍ່ໄດ້ຂຶ້ນກັບຄວາມສາມາດໃນການ ເວົ້າ ຫຼື ການໃຊ້ພາສາມືຂອງເຂົາ.*